# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກສວນຄົວ

(ສະບັດທົດລອງ)



ຂຽນໂດຍ: ອ.ຈ ສະໄໝ

ຂໍ້ມູນຈາກ: ບ້ານ ປາກມີ້ ເມືອງ ຊະນະຄາມ ແຂວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກເພັດ

ຮິບໂຮມ ແລະຈັດພິມໜ້າໂດຍ: ສິດອາພອນ ດວງປະສິດ

ຜູ້ຮຽບຮຽງ: ອ.ຈ. ໂພໄຊ ຈັນທະວົງສາ

ອ.ຈ. ລົ່ງ ແສງດາລາ

ເຈົ້າຂອງ: ຫ້ອງການສຶກສາເມືອງຊະນະຄາມ ແຂວງວຽງຈັນ ຈັນ ແລະສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation
A world for children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານ ແລະອາສາສະໝັກຊຶ່ງໄດ້ຮຽບຮຽງໃນເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາ ແລະສຶກສາເມືອງຊະນະຄາມ.

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດນຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ 1 ປໍ 2 ແລະບົດທີ່ຍາກກໍເອົາສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາບກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຈະໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ສາລະໜ້າຮູ້

ການເຮັດສວນຄົວແມ່ນວິຖີຊີວິດປະເພດໜຶ່ງ ທີ່ຄົນລາວເຮົາຢູ່ທົ່ວທຸກ ຂົງເຂດໄດ້ມີການເຮັດສວນຄົວບາງຄົນກໍເຮັດເພື່ອຈຳໜ່າຍ ແລະ ບາງພວກກໍເຮັດເພື່ອໃຊ້ໄວ້ກິນພາຍໃນຄອບຄົວເພື່ອປະຢັດລາຍຈ່າຍ

## ຫຼັກການວິທະຍາສາດ

ການເຮັດສວນຄົວກໍເພື່ອປະຫຍັດລາຍຈ່າຍ ອີກຢ່າງໜຶ່ງຖ້າເຫຼືອກິນກໍ ສາມາດນຳເອົາໄປຂາຍເພື່ອເປັນລາຍໄດ້ເຂົ້າຄອບຄົວອີກດ້ວຍ.

ອຸປະກອນ

1. ແວກ ຫຼື ຫຼົ້ວ



2. ຈົກ



3. ໄມ້ຄ້ອນທຸບດິນ



PDF created with pdfFactory Pro trial version www.pdffactory.com

4. ຄາດ



**ວິທີການເຮັດ**

ເອົາແວກ ຫຼື ຫຼົ້ວເສຍຫຍ້າໃຫ້ມັນແປນ



ເອົາຄາດກາວດອອກຖິ້ມໃຫ້ໝົດ



PDF created with pdfFactory Pro trial version www.pdffactory.com

ເລ້ວເອົາຈົກມາຂຸດໜານຄວາມກ້ວາງຂອງໜານ 80 ຊັງຕີແມັດ
ຄວາມຍາວເທົ່າໃດກໍໄດ້ຕາມຄວາມພໍໃຈມັກ.



ຫຼັງຈາກນັ້ນເອົາໄມ້ຄ້ອນທຸບດິນໃນໜານໃຫ້ມຸນດີ



PDF created with pdfFactory Pro trial version www.pdffactory.com

ແລ້ວເອົາຄາດມາແປງອີກເທື່ອໜຶ່ງ



ເມື່ອແປງແລ້ວແມ່ນນຳເອົາຜັກມາປູກລົງໃສ່ດິນທີ່ແປງໄວ້ນັ້ນ.



PDF created with pdfFactory Pro trial version www.pdffactory.com

## ກາບ: ການເຮັດສວນຄົວ

ຢູ່ບ້ານຂ້ອຍ ເຄີຍເຮັດສວນຄົວ
ຜັກກາດຫົວ ພ້ອມຫອມທຸກຢ່າງ
ຂ້ອຍຂຸດຮ່າງ ກາງເປັນທາງຫຽວ
ເມື່ອຂ້ອຍຫຼຽວ ເຫັນຜັກຫຼາຍຮ່ອງ
ພວກພີ່ນ້ອງ ມາຍ້ອງວ່າງາມ
ເພິ່ນເອີ້ນຖາມ ມີຜັກຫຍັງແດ່
ເບິ່ງລ້ອນແຕ່ ເປັນຕາອອນຊອນ
ເອົາມາປ້ອນ ຕະຫລາດບ້ານເຮົາ

## **ເຊີ້ງ**: ການເຮັດສວນຄົວ

ໂຮ້...ຮິ້ວ....
ເອົາມາເຮົາມາ ເຮົາມາພ້ອມພາ
ມາສ້າງມາສາ ອອກແຮງຕໍ່ສູ້
ວຽກງານລວມໝູ່ ສູ້ຊິນສວນຄົວ
ຢ່າໄດ້ແຕ່ມົວ ຫຼີ້ນກິນລ້າໆ
ຢ່າໄດ້ໃຫ້ເຂົ້າຊ່າ ເປັນຄືນບໍ່ດີ
ວ່າເຮົາອັບປີ ເຮຮາເລາະບ້ານ
ຢ່າໄດ້ຂີ້ຄ້ານ ວຽກໄຮ່ນາສວນ.

PDF created with pdfFactory Pro trial version www.pdffactory.com

# ເພງ: ການເຮັດສວນຄົວ

ເຊີນຊວນ　　ເຊີນຊວນເຊີນຊວນ
ມາເປັນຂະບວນ　　ເຮັດສວນນຳກັນ
ແຕ່ລະຄົນ　　ເຮັດດ້ວຍຄວາມຂະຫຍັນ
ໃຫ້ພ້ອມພຽງກັນ　　ທຸກວັນຕະຫລອດໄປ

# **ລຳ**: ການເຮັດສວນຄົວ

ຟັງເດີເຈົ້າ　　ຄຸນພໍ່ສັດທາ
ຂ້ອຍຊິພັນລະນາ　　ວຽກງານຕ່າງໆ
ວຽກອັນໃດກໍຊ່າງ　　ວຽກໄຮ່ນາສວນ
ເຮັດໃຫ້ເປັນຂະບວນ　　ໃຫ້ເຫຼືອກິນເຫຼືອໃຊ້
ສິ່ງທີ່ເຮົາເຮັດໄດ້　　ເອີ້ນວ່າຜົນງານ
ພວກເຮົາລູກຫຼານ　　ເອົາເປັນແບບຢ່າງ
ຢ່າປ່ອຍດິນເປົ່າຫວ່າງ　　ໃຫ້ເຮັດສວນຄົວ
ຢ່າໄດ້ແຕ່ມົວ　　ທ່ຽວຫຼິ້ນຊື່ໆ ຊື່ໆທ່ຽວຫຼິ້ນຊື່ໆ

PDF created with pdfFactory Pro trial version www.pdffactory.com

# ຮູບແລະປະຫວັດຂອງຜູ້ຂຽນ



ຊື່: ອ.ຈ ສະໄໝ

ນາມສະກຸນ: ສາວະນິນ

ອາຍຸ: 41 ປີ

ອາຊີບ: ຄູສອນ

## ເຫດຜົນຂອງການຫົວຂໍ້ນີ້ບົດນີ້

ການທີ່ຂຽນຫົວຂໍ້ນີ້ຂຶ້ນມາ ກໍຢາກໃຫ້ເດັກນ້ອຍຮູ້ຈັກການເຮັດສວນຄົວເພາະການເຮັດສວນຄົວມັນແມ່ນເຮັດໃຫ້ເຮົາປະຢັດລາຍຈ່າຍອີກທາງໜຶ່ງບາງຄັ້ງເມື່ອປູກເປັນຈຳນວນຫຼາຍເຮົາຍັງສາມາດເອົາໄວ້ຂາຍໄດ້ອີກ.

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com